ນ້ຳໃຈວັນຊາດ ທີ ໒ ທັນວາ ໝັ້ນຍືນ

ນ.ສ.ພ ລາຍວັນ
ວຽງຈັນໃໝ່
VIENTIANE MAI NEWSPAPER

ສຳນັກງານເລກທີ 36 ຖະໜົນເຊດຖາທິລາດ ຕູ້ ປ.ນ 989 ໂທ. 212623-4 ແຟກ 215989
ແຮມ ໑໐ ຄ່ຳ ເດືອນ ໑໒ ປີຂານ ພ.ສ ໒໕໕໓
www. vientianemai.net

1 ທັນວາ 2010
ວັນພຸດ
ປີທີ 35
ສະບັບທີ 12162

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
35 ປີ
2/12/1975-2/12/2010
ນ້ຳໃຈວັນຊາດ ທີ 2 ທັນວາ ໝັ້ນຍືນ



# ແຂວງສະຫວັນນະເຂດ ໄດ້ຮັບທຶນການສຶກສາ ຈາກ EDF ໑.໒໖໐ ທຶນ





✻ ກອງທຶນການສຶກສາເພື່ອການພັດທະນາ(EDF-LAO) ໄດ້ນຳພາຄະນະໂຄງການ Merry Music Project ຮ່ວມກັບກອງທຶນການສຶກສາ ເພື່ອການພັດທະນາຍີ່ປຸ່ນ (EDF-JAPAN) ລົງຢ້ຽມຢາມ ແລະ ຈັດກິດຈະກຳຮ່ວມກັບນັກຮຽນປະຖົມບ້ານໂພນສະຫວ່າງ ເມືອງອຸທຸມພອນ ແຂວງສະຫວັນນະເຂດ ໃນລະຫວ່າງວັນທີ 24-25 ພະຈິກ 2010.

ກິດຈະກຳທີ່ລົງໄປຈັດຕັ້ງປະຕິບັດຄັ້ງນີ້ ປະກອບດ້ວຍການຮ້ອງເພງ ແບ່ງກຸ່ມນັກຮຽນເພື່ອຄົ້ນຄ້ວາກ່ຽວກັບວິທີການເຕັ້ນປະກອບທ່າທາງການຖູແຂ້ວ ແລະ ຖ່າຍຮູບເອົານ້ອງນ້ອຍນັກຮຽນກຳລັງຫົວ ເພື່ອຈະນຳໄປຜະລິດເປັນຄັນຮົ່ມ ເປັນປຶດສະຕິ ແລະ ນຳໄປສະເໜີຂໍທຶນຈາກຜູ້ໃຫ້ທຶນຢູ່ປະເທດຍີ່ປຸ່ນ ແລະ ນຳທຶນມາຊ່ວຍເຫຼືອເດັກນ້ອຍດັ່ງກ່າວ ທ່ານ ໂກຈິ ມິຊູຕານິ ຜູ້ຈັດການໂຄງການ Merry Music Project ເວົ້າວ່າ: ໂຄງການ Merry Music Project ສ້າງຂຶ້ນ 10 ກວ່າປີຜ່ານມາ ເຊິ່ງໄດ້ມີການບັນທຶກພາບ ສຽງ ຮອຍຍິ້ມ ແລະ ຄວາມກະຕືລືລົ້ນຂອງເດັກນ້ອຍນັກຮຽນ ວ່າອະນາຄົດເຂົາເຈົ້າຢາກມີອາຊີບຫຍັງ ເຊິ່ງ ສປປ ລາວ ແມ່ນປະເທດທີ 27 ທີ່ໂຄງການນີ້ໄດ້ເຂົ້າມາຈັດກິດຈະກຳຍ້ອນວ່າຮອຍຍິ້ມແມ່ນປຽບເໝືອນອະນາຄົດ ກໍຄືເດັກນ້ອຍປຽບເໝືອນອະນາຄົດຂອງຊາດ ສະນັ້ນການມີຮອຍຍິ້ມທີ່ສວຍງາມກໍປຽບເໝືອນການປາສະຈາກສົງຄາມ ໂດຍສຽງທີ່ອັດນັ້ນຈະນຳໄປປະດິດເປັນເພງ ແລະ ພາບແມ່ນຈະນຳໄປຜະລິດເປັນຄັນຮົ່ມ ປຶດສະຕິ ແລະ ອື່ນໆ ເພື່ອໃຫ້ມວນຊົນຮັບຮູ້ກ່ຽວກັບປະຊາຊົນ ແລະ ປະເທດລາວຫຼາຍຂຶ້ນ ທ່ານນາງ ຄຳສະຫວ່າງ ຈັນທະໄລ ຜູ້ຈັດການລະດັບພາກ EDF-LAO ເວົ້າວ່າ: EDF-LAO ໄດ້ເລີ່ມສຳຫຼວດປີ 1995 ແລະ ໄດ້ຈັດຕັ້ງປະຕິບັດປີ 1997 ປະກອບມີ 4 ແຂວງ ຄື: ຄຳມ່ວນ ສະຫວັນນະເຂດ ສາລະວັນ ແລະ ເຊກອງ ກິດຈະກຳຫຼັກແມ່ນໃຫ້ທຶນການສຶກສາສຳລັບນັກຮຽນປະຖົມ ແລະ ມັດທະຍົມ ໂດຍປີນີ້ແຂວງສະຫວັນນະເຂດໄດ້ຮັບທຶນການສຶກສາທັງໝົດ 1.260 ທຶນ (ທຶນລະ 500.000 ກວ່າກີບ) ມີທຶນກໍ່ສ້າງໂຮງຮຽນ ຕູ້ສະໝຸດ ສ້າງຄູຊົນເຜົ່າ ສ້າງຄູປະລິນຍາໂທ ນອກນີ້ຍັງມີອຸປະກອນກິລາ ແລະ ເຄື່ອງໃຊ້ຫ້ອງການປະກອບໃຫ້ໂຮງຮຽນເປົ້າໝາຍ ໂດຍທຶນແຕ່ລະປີນັ້ນແມ່ນອີງຕາມການສະໜອງຂອງ EDF-JAPAN ສຳລັບໂຄງການ Merry Music Project ແມ່ນໂຄງການສ້າງຂຶ້ນໃໝ່ໂດຍການມາຈັດກິດຈະກຳຄັ້ງນີ້ ເພື່ອເກັບກຳຂໍ້ມູນນຳໄປຜະລິດສິ່ງດັ່ງທີ່ເວົ້າຂ້າງເທິງເພື່ອນຳສະເໜີຂໍທຶນ.

**ຂ່າວຍັງແຈ້ງໃຫ້ຮູ້ອີກວ່າ:** ໂອກາດລົງຈັດກິດຈະກຳຄັ້ງນີ້ ຄະນະດັ່ງກ່າວ ຍັງໄດ້ຈັດກິດຈະກຳການຫຼິ້ນດົນຕີ ອອກແບບການເຕັ້ນປະກອບທ່າທາງການຖູແຂ້ວ ແລະ ຖ່າຍຮູບຮ່ວມກັບນັກຮຽນປະຖົມບ້ານໂພນຕູມ ແລະ ໂຮງຮຽນປະຖົມບ້ານນາ ເມືອງອຸທຸມພອນ ແຂວງສະຫວັນນະເຂດ ອີກດ້ວຍ.